**Weekly news update from 29/1-3/2/2018 about land and natural resource issues in Laos.**
**Summarized by LIWG Communication Officer.**

**………..**

**ສະຫຼຸບຂ່າວປະຈຳອາທິດລະຫວ່າງວັນທີ 29/1-3/2/2018 ກ່ຽວກັບປະເດັນທີ່ດິນແລະຊັບພະຍາກອນທຳມະຊາດໃນປະເທດລາວ.**
**ສັງລວມໂດຍ ທີມງານສື່ສານ ກອງເລຂາ LIWG.**

# English news

**New law to strengthen business dispute resolution: Vientiane Times**
***29 January 2018***
Business operators in Laos have various challenges due to a lack of commonly accepted principles and regulations to manage various aspects of business.
Government officials met with private sector representatives last week to discuss an amendment to the Law on Economic Dispute Resolution, with a view to improving the management of business operations in Laos and benefitting both businesspeople and the government.
The fundamental question behind this law is "how can a Lao-specific solution make businesspeople and other investors more confident that their legitimate rights will be recognised and enforced?".

**Work underway to elevate Hin Nam Nor to World Heritage status: Vientiane Times**
***29 January 2018***
Nomination of the Hin Nam Nor National Protected Area as Laos' first natural World Heritage site got into gear as officials met in Thakhaek district, Khammuan province, on Friday to endorse the nomination and management plans for 2018.
"World Heritage status would also enhance protection of the area, improve conservation, and facilitate better management of the natural resources in and around Hin Nam Nor, promoting ecotourism and scientific research," Mr Boua Ngeun said.
Hin Nam Nor is believed to have "outstanding universal value", adding to or complementing the conservation values of global importance in Phong Nga Ke Bang by UNESCO. These values need strong protection and therefore need a strong commitment from the highest level and by all stakeholders.

**Borikhamxay conducts ongoing clampdown against illegal logging: Vientiane Times**
***30 January 2018***
Borikhamxay provincial authorities are continuing to enforce the rule of law by clamping down on illegal logging and combating wildlife hunting despite a decline in unlawful activities in recent years.
The Prime Minister's Order No. 15, issued on May 13, 2016, has served as a significant legal tool in the fight against deforestation and the organised criminal elements behind the illicit timber trade who previously hired local villagers to fell trees and sell them to traders.
Officials say Laos needs to learn from other countries, including Vietnam, with regards to forestry management. This would enable Laos to accomplish its goal of increasing forest cover to 70 percent of the country's terrain by 2020, facilitating socio-economic development and poverty reduction efforts.
The government understands that forests are critical for hydropower development and the livelihoods of local people.

**Lao PDR- National Road 13 Improvement and Maintenance Project: Early Warning system**
***2 February 2018***
Lao PDR: National Road 13 Improvement and Maintenance Project is the second AIIB project in the Mekong region and it is the first project in Laos. It is co-financing with World Bank.

According to the AIIB website, the objective of the project is "to improve road conditions, road safety and the climate resilience of National Road 13. The road design will also be strengthened to meet ASEAN standards."  The National Road 13 (NR13) North-South corridor (1,500 km) links the northernmost province of Luang Namtha (bordering China) through the capital city of Vientiane and all the way to the southernmost province of Champasak (bordering Cambodia).
The main social issues identified by initial bank documents are:
"The Project will result in land acquisition, disruption of agricultural and livelihood activities, and relocation of residential and commercial structures, primarily due to the upgrade from 2 to 4-lanes. The Project’s main social issues relate to the impacts of land acquisition, disruption during construction (restrictions on access to properties/schools and other buildings along the alignment, interruptions to water and power supply) as well as the potential influx of workers. The ethnic groups who live in villages along the route, may be disproportionately impacted."
The Project implementation period (Start Date - End Date) will be August 2018 – May 2023.

### Belt, road forum realises Laos-China cooperation: Vientiane Times

***3 February 2018***

“The main objectives of the belt and road policy are to support free economic activities under the law, the most efficient allocation of natural resources, and deepening market integration,” Dr Kikeo Khaykhamphithoun said.
The Chinese are the main investors in Laos and have interests in 769 projects valued at more than US$7 billion, not including the under-construction Laos-China railway.
The Lao Sat 1, hydropower projects, electricity integration and power grid connectivity, finance and banking, and energy among others were highlighted by Mr Cai as key projects in economic and trade cooperation between the two countries.

Also found similar news as **‘Belt and Road Forum for Laos-China Cooperation Opens’**

### Ministry disseminates decree on well-being, development criteria: Vientiane Times

***3 February 2018***

The decree defines well-being and development criteria as guidance for achieving poverty eradication targets.
The criteria relate to households, developed villages, the amalgamation of large villages into small rural townships, and resilient districts, in line with the Resolution of the Party Congress and national socio-economic development plans.
Now that the official poverty level has been raised, officials in charge of poverty reduction say the government must do more to realise Laos’ goal to graduate from poverty in 2020.
The government has set a target to raise 4,833 families above the poverty line this year, according to the Socio-economic Development Project for 2018.
If achieved, this would lower the number of poor families to 66,139, accounting for just 5.67 percent of all families nationwide.

## ຂ່າວພາສາລາວ

### ນັກທຸລະກິດຈີນ ລົງນາມໃນບົດບັນທຶກຄວາມເຂົ້າໃຈ ໃນຫລາຍໂຄງການ: ຂ່າວໂດຍ ຂ່າວສານປະເທດລາວ

**ວັນທີ 30/1/2018**

ໃນໂອກາດພົບປະລະແລກປ່ຽນ ດ້ານທຸລະກິດ ຫວ່າງອົງການປົກຄອງ ແຂວງບໍ່ແກ້ວ ແລະ ນັກລົງທຶນເຂດເສດຖະກິດພິເສດ ສາມຫລ່ຽມຄຳ ລວມທັງ ນັກທຸລະກິດພາຍໃນ ແລະ ຕ່າງປະເທດ ເມື່ອວັນທີ 28 ມັງກອນ 2018 ຢູ່ເຂດສາມຫລ່ຽມຄຳ ເມືອງຕົ້ນເຜິ້ງ ແຂວງບໍ່ແກ້ວ, ເຊິ່ງມີການລົງນາມໃນບົດບັນທຶກຄວາມເຂົ້າໃຈ (MOU) ລະຫວ່າງຜູ້ລົງທຶນ ແລະ ກຸ່ມບໍລິສັດດອກງີ້ວຄຳ ຈຳນວນ 9 ໂຄງການ ເພື່ອຮ່ວມກັນພັດທະນາ ເຂດເສດຖະກິດພິເສດ ສາມຫລ່ຽມຄຳ ໃຫ້ມີຄວາມຈະເລີນກ້າວໜ້າຕາມທິດຂອງລັດຖະບານສອງປະເທດ ລາວ-ຈີນ.

ໃນຂະນະທີ່ ທ່ານ ຈ້າວເຫວີຍ ປະທານສະພາບໍລິຫານເຂດເສດຖະກິດພິເສດ ສາມຫລ່ຽມຄໍາ ກໍໄດ້ລະບຸວ່າ: ບັນດາຜູ້ເຂົ້າຮ່ວມເວທີພົບປະຄັ້ງນີ້, ລ້ວນແຕ່ມີປະສົບການດ້ານການຄ້າ-ການລົງທຶນ, ເຊິ່ງເປັນໂອກາດທີ່ຈະພ້ອມກັນ ວາງແຜນ ຮ່ວມກັນລົງທຶນ ເຂົ້າພັດທະນາເຂດສາມຫລ່ຽມຄໍາ ໃຫ້ຈະເລີນກ້າວໜ້າໄປເລື້ອຍໆ ອັນເປັນການປະຕິບັດຂໍ້ລິເລີ່ມແນວຄວາມຄິດ ໜຶ່ງແລວທາງ ໜຶ່ງເສັ້ນທາງ ຂອງ ສປ ຈີນ ໃຫ້ມີຜົນສໍາເລັດເປັນກ້າວໆ. ການລົງທຶນ ຫລື ການດໍາເນີນທຸລະກິດ ຢູ່ເຂດສາມຫລ່ຽມຄໍາ ແຫ່ງນີ້ ເຊິ່ງເປັນດິນແດນຂອງ ສປປ ລາວ ທີ່ມີຄວາມເໝາະສົມໃນການລົງທຶນ ຈຶ່ງເຊີນຊວນບັນດານັກທຸລະກິດທັງຈີນ ແລະ ລາວ ເຂົ້າມາຮ່ວມພັດທະນາເຂດສາມຫລ່ຽມຄໍາ ກໍຄືພັດທະນາແຂວງບໍ່ແກ້ວ ໃຫ້ມີໃບໜ້າ ໃໝ່ໃນຕໍ່ໜ້າ.

**ເວທີປຶກສາຫາລືການຮ່ວມມືລາວ-ຈີນ"ໜຶ່ງແລວ ໜຶ່ງເສັ້ນທາງ"ຈະຈັດຂຶ້ນວັນທີ 2-3 ກຸມພາ 2018: ຂ່າວໂດຍ ຂ່າວສານປະເທດລາວ**

**ວັນທີ 30/1/2018**

ກອງປະຊຸມເວທີປຶກສາຫາລື ໃນຄັ້ງນີ້ ຈະເປັນສ່ວນສໍາຄັນໜຶ່ງ ໃນການຜັນຂະຫຍາຍ ຍຸດທະສາດຫັນປະເທດທີ່ບໍ່ມີຊາຍແດນຕິດກັບທະເລ ໃຫ້ກາຍເປັນປະເທດເຊື່ອມຈອດ ເຊື່ອມໂຍງກັບພາກພື້ນ ແລະ ສາກົນ ຂອງ ສປປ ລາວ ແລະ ຂໍ້ລິເລີ່ມ “ໜຶ່ງແລວ ໜຶ່ງເສັ້ນທາງ” ຂອງ ສປ ຈີນ ກໍ່ຄືເປັນການຊຸກຍູ້ ແລະ ຜັນຂະຫຍາຍຜົນສໍາເລັດຂອງການຢ້ຽມຢາມ ສປປ ລາວ ເປັນທາງການຂອງເລຂາທິການໃຫຍ່ ສີ ຈິ້ນຜິງ ໃນທ້າຍປີ 2017 ຜ່ານມາ.

ໂອກາດດັ່ງກ່າວກໍ່ຈະມີກອງປະຊຸມຍ່ອຍ ເຊິ່ງເປັນເວທີສົນທະນາສະເພາະ 5 ເວທີ ເປັນຕົ້ນ ເວທີສົນທະນາ ໃນຫົວຂໍ້:"ການຮ່ວມມື ລາວ-ຈີນດ້ານກະສິກໍາ ແລະ ແກ້ໄຂຄວາມທຸກຍາກ", "ດາວທຽມສ້າງຂົວຕໍ່ສື່ສານສາຍສໍາພັນ, ໂທລະຄົມພາໃຫ້ຫຍັບເຂົ້າຫາກັນ, ວັດທະນະທໍາ ຊຸກຍູ້ການເຊື່ອມໂຍງ". "ສົ່ງເສີມການຮ່ວມມື ແລະ ພັດທະນາຂົງເຂດພະລັງງານ ລາວ-ຈີນ ພາຍໃຕ້ ໜຶ່ງແລວ ໜຶ່ງເສັ້ນທາງ", "ຊຸກຍູ້ການຮ່ວມມືດ້ານການເງິນ, ຮ່ວມສ້າງສາຍສໍາພັນເສດຖະກິດ ລາວ-ຈີນ", "ການຮ່ວມມືດ້ານວິທະສາດເຕັກໂນໂລຊີ ພາຍໃຕ້ແນວຄວາມຄິດ ໜຶ່ງແລວ ໜຶ່ງເສັ້ນທາງ" ເຊິ່ງຈະມີບັນດາການນໍາ, ຜູ້ຊ່ຽວຊານ, ວິຊາການຂະແໜງການຕ່າງໆທີ່ກ່ຽວຂ້ອງພາກລັດ ແລະ ພາກທຸລະກິດ ລາວ ແລະ ຈີນ ຮ່ວມປຶກສາຫາລືກັນ.

*ອ່ານຂ່າວເພີ່ມເຕີມຫົວຂໍ້: ລາວ-ຈີນ ເສີມຂະຫຍາຍການຮ່ວມມືຕາມທິດ 4 ດີ.*

**ສ.ອາເມຣິກາ ຂຶ້ນບັນຊີດໍາ ຄິງໂຣມັນ ກາສິໂນ ແຂວງບໍ່ແກ້ວ ສປປ ລາວ ເປັນອາຊະຍາກໍາຂ້າມຊາດ: ຂ່າວໂດຍ ອິດສະຫຼະ**

***ວັນທີ 31/1/2018***

ສໍານັກຂ່າວຕ່າງປະເທດລາຍງານ 31 ມັງກອນ 2018 ວ່າ: ກະຊວງການເງິນຂອງ ສະຫະລັດອາເມຣິກາ ອອກຖະແຫຼງການເມື່ອວັນອັງຄານທີ່ຜ່ານມາ ເລື່ອງການຂຶ້ນບັນຊີດໍາ “ຄິງ ໂຣມັນ ກາສິໂນ” (Kings Romans Casino) ໃນຖານະອົງການອາຊະຍາກໍາຂ້າມຊາດ ໂດຍມີສະຖານທີ່ຕັ້ງຢູ່ພາຍໃນເຂດເສດຖະກິດພິເສດສາມຫຼ່ຽມທອງຄໍາ ທີ່ມີທີ່ຕັ້ງທີ່ ເມືອງຕົ້ນເຜິ້ງ ແຂວງ ບໍ່ແກ້ວ ສປປ ລາວ ທີ່ມຊາຍແດນຕິດກັບປະເທດໄທ ແລະ ມຽນມາ.

ນອກເໜືອຈາກການລະບຸໃຫ້ ຄິງໂຣມັນ ກາສິໂນ ມີສະຖານະເປັນອົງການອາຊະຍາກໍາຂ້າມຊາດແລ້ວ ກະຊວງການເງິນສະຫະລັດ ອາເມຣິກາ ຍັງໄດ້ຂຶ້ນບັນຊີ 4 ບຸກຄົນ ທີ່ມີສ່ວນກ່ຽວຂ້ອງໂດຍກົງກັບການບໍລິການອົງກອນແຫ່ງນີ້ດ້ວຍ.

**ລາວ-ຈີນ ໄດ້ມີການຮ່ວມມື ດ້ານພະລັງງານ ແລະ ບໍ່ແຮ່ ສູງເຖິງ 10 ຕື້ກວ່າໂດລາ: ຂ່າວໂດຍ ຂ່າວສານປະເທດລາວ**

**ວັນທີ 2/2/2018**

ສປປ ລາວ ແລະ ສປ ຈີນ ໄດ້ມີການຮ່ວມມື ດ້ານພະລັງງານ ແລະ ບໍ່ແຮ່, ໂດຍລັດ ຖະບານ ສປ.ຈີນ ໄດ້ສະໜອງທຶນ ແລະ ໃຫ້ທຶນສະໜັບສະໜູນ ໃຫ້ແກ່ລັດຖະບານ ສປປ ລາວ ລວມມູນ ຄ່າເຖິງ 10 ຕື້ກວ່າໂດລາສະຫະລັດ.

ໂດຍການ ຮ່ວມມືດັ່ງກ່າວ, ໄລຍະຜ່ານມາ ຖືວ່າຢູ່ໃນອັນດັບຕົ້ນໆ. ມາຮອດປັດຈຸບັນ ສປປ ລາວ-ສປ ຈີນ ໄດ້ມີ ການຮ່ວມມື ກັນພັດທະນາອຸດສະຫະກໍາ ພະລັງງານ ໄຟຟ້າ, ເຊິ່ງມີໂຄງການ ທີ່ຢູ່ໃນ ໄລຍະດໍາເນີນການ ຜະລິດແລ້ວ 9 ໂຄງການ ຄື: ໂຄງການນໍ້າລີກ 1, 2, ໂຄງການນໍ້າງື່ມ 5, ໂຄງການນໍ້າງຽບ 2, ໂຄງການ ນໍ້າອູໄລຍະທີ 1 (ນໍ້າອູ 2,5,6), ນໍ້າມັງ1, ນໍ້າໄຜ່, ນໍ້າແບ່ງ ແລະ ພວມກໍາລັງກໍ່ສ້າງອີກ 10 ກວ່າໂຄງ ການ. ນອກນີ້, ຍັງມີການຮ່ວມມື ກໍ່ສ້າງສາຍ ສົ່ງໄຟຟ້າ 230KV ແລະ 500 KV ຈໍານວນ 8 ໂຄງການ. ສໍາລັບ ການຮ່ວມມືດ້ານບໍ່ແຮ່ ກໍໄດ້ຮັບ ການຈັດຕັ້ງປະຕິບັດ ຢ່າງມີປະສິດທິຜົນ, ມາຮອດປັດຈຸບັນ ມີ 52 ໂຄງການຂອງຜູ້ລົງທຶນ ທີ່ໄດ້ຮັບອະນຸຍາດ

ຈາກລັດຖະບານລາວ ທີ່ພວມດໍາເນີນ ການຂຸດຄົ້ນ ແລະ ປຸງແຕ່ງ. ພ້ອມດຽວກັນ, ກໍຍັງມີ 20 ກວ່າໂຄງການ ຢູ່ໃນໄລຍະ ດໍາເນີນການສໍາຫລວດ, ໃນການສຶກສາ ຄວາມເປັນໄປໄດ້ ທາງດ້ານ ເສດຖະກິດ-ເຕັກນິກ.

**ເຂື່ອນນໍ້າລີກ 1 ຄືບໜ້າເກືອບ 80% ຂະນະທີ່ມີຜູ້ຖືກໂຄງການ 112 ຄອບຄົວ: ຂ່າວໂດຍ ເສດດຖະກິດ-ສັງຄົມ**

***ວັນທີ 2/2/2018***

ໂຄງການກໍ່ສ້າງເຂື່ອນໄຟຟ້ານໍ້າລີກ1 ແມ່ນໄດ້ເລີ່ມສ້າງມາແຕ່ປີ 2014 ມີມູນຄ່າທັງໝົດ 987.2 ຕື້ກີບ ຫຼື ປະມານ 123.4 ລ້ານໂດລາ, ມີກໍາລັງຕິດຕັ້ງ 65 ເມກາວັດ. ໂຄງການດັ່ງກ່າວເປັນການລົງທຶນແບບມີສ່ວນຮ່ວມຂອງບໍລິສັດ GPSC ຖືຮຸ້ນ 40%, ບໍລິສັດໄທໂດ ຖືຮຸ້ນ 40%, ເອກະຊົນຈາກ ສ.ເກົາຫຼີ ຖືຮຸ້ນ 10% ແລະ ບໍລິສັດ ໄຟຟ້າລາວ ຖືຮຸ້ນ 10%.

ການຍົກຍ້າຍ-ຈັດສັນ ຄອບຄົວທີ່ຖືກຜົນກະທົບຈາກໂຄງການກໍ່ສ້າງເຂື່ອນນໍ້າລີກ 1 ໃນຈໍານວນ 3 ບ້ານ 112 ຄອບຄົວ ກໍ່ໄດ້ມີການໄກ່ເກ່ຍເພື່ອຊົດເຊີຍ. ມາຮອດປະຈຸບັນມີຫຼາຍຄອບຄົວໄດ້ເຫັນດີເຊັນຮັບເອົາຄ່າຊົດເຊີຍຈາກຖໂຄງການ ແລະ ຍັງຈໍານວນສ່ວນໜ້ອຍທີ່ບໍ່ທັນເຊັນຮັບເອົາມູນຄ່າຊົດເຊີຍດັ່ງກ່າວ.

*ອ່ານຂ່າວທີ່ກ່ຽວຂ້ອງເພີ່ມເຕີມກ່ຽວກັບ ຜົນກະທົບຂອງໂຄງການກໍ່ສ້າງແລວສົ່ງໄຟຟ້າແຮງສູງ ແຂວງອັດຕະປື.*

**ລັດຖະບານມີໂຄງການທີ່ຈະປັບປຸງ ແລະ ຂະຫຍາຍເສັ້ນທາງເລກທີ 13 ເໜືອ: ຂ່າວໂດຍ ອິດສະຫຼະ**

***ວັນທີ 3/2/2018***

ລັດຖະບານ ສປປ ລາວ ມີໂຄງການທີ່ຈະປັບປຸງເສັ້ນທາງຫຼວງເລກທີ 13 ເໜືອ (N13 North) ໂດຍການຮ່ວມມືລະຫວ່າງລັດ ແລະ ເອກະຊົນ (PPP). ໂຄງການດັ່ງກ່າວແມ່ນໄດ້ມີການອອກແບບ ເພື່ອປັບປຸງການເຊື່ອມຕໍ່ລະບົບການຂົນສົ່ງ ໂດຍການປັບປຸງ ແລະ ບູລະນະເສັ້ນທາງ ທີ່ກໍານົດເປັນເຄືອຂ່າຍເສັ້ນທາງຂອງ ສປປ ລາວ, ໂຄງການດັ່ງກ່າວ ແມ່ນຈະໄດ້ຈັດຕັ້ງປະຕິບັດ ໂດຍກະຊວງໂຍທາທິການ ແລະ ຂົນສົ່ງ ໂດຍຜ່ານກົມທາງ.

ໂຄງການດັ່ງກ່າວແມ່ນຕັ້ງຢູ່ພາຍໃນ 2 ແຂວງ: ແຂວງນະຄອນຫຼວງວຽງຈັນ (ເມືອງນາຊາຍທອງ) ແລະ ແຂວງວຽງຈັນ (ເມືອງໂພນໂຮງ).

ປັດຈຸບັນແມ່ນໄດ້ສໍາເລັດ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທໍາມະຊາດແລ້ວ ແລະ ການນໍາໃຊ້ທີ່ດິນພາຍໃນແລວທາງໂຄງການສ່ວນໃຫຍ່ແມ່ນທີ່ດິນຢູ່ອາໄສ, ທຸລະກິດ, ສະຖານທີ່ອຸດສາຫະກໍາ ແລະ ພື້ນທີ່ກະສິກໍາລະຫວ່າງແຕ່ລະບ້ານ ແລະ ເທດສະບານເມືອງ ຍ້ອນວ່າເສັ້ນທາງດັ່ງກ່າວມີຊຸມຊົນຕໍ່ເນື່ອງຕັ້ງແຕ່ ນະຄອນຫຼວງວຽງຈັນຈົນໄປຮອດເມືອງໂພນໂຮງ. ສ່ວນເຂດທີ່ມີພືດທໍາມະຊາດຕາມເສັ້ນທາງນັ້ນສາມາດສັງເກດເຫັນໄດ້ ແຕ່ກິໂລແມັດ 49-55 ທີ່ຢູ່ລຽບຕາມເຂດສະຫງວນທາງ.

ເນື່ອງຈາກໂຄງການດັ່ງກ່າວແມ່ນກໍາລັງຢູ່ໃນຂະບວນການສຶກສາຄວາມເປັນໄປໄດ້, ການສໍາຫຼວດຜົນກະທົບ ແລະ ການອອກແບບຈຶ່ງຍັງບໍ່ໄດ້ກໍານົດຊັດເຈນເທື່ອວ່າຈະລົງມືກໍ່ສ້າງປັບປຸງ ແລະ ບໍາລຸງຮັກສາເມື່ອໃດ.

*ຄົ້ນຫາຂໍ້ມູນ (ພາສາອັງກິດ) ເພີ່ມເຕີມກ່ຽວກັບໂຄງການດັ່ງກ່າວໄດ້ ທີ່ນີ້.*